ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ຫ້ອງການ

ເລກທີ 1692 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 30 / 08 / 19

# ແຈ້ງການ

ຮຽນ : ທ່ານ ຫົວໜ້າກົມ ລ້ຽງສັດ ແລະ ການປະມົງ.

ເລື່ອງ: ທິດຊີ້ນຳຕໍ່ການສະເໜີຂໍອະນຸມັດ ເຊັນສັນຍາກັບບໍລິສັດ ແອວເອັສ ເສີນຄັງ ຂາອອກ-ຂາເຂົ້າຈຳກັດ ວ່າດ້ວຍການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມຂອງໂຄງການ ລ້ຽງງົວຊີ້ນເປັນສິນຄ້າ ແລະ ສ້າງສະຖານທີ່ກັກກັນສັດ ຢູ່ບ້ານ ນາຄຳ ເມືອງ ສິງ, ແຂວງ ຫຼວງນ້ຳທາ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 3888/ກປ, ລົງວັນທີ 29 ສິງຫາ 2017 ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ເອກະສານຈາກກົມ ລ້ຽງສັດ ແລະ ການປະມົງ ສະບັບເລກທີ 2359/ກລປ, ລົງວັນທີ 26 ສິງຫາ 2019.
- ອີງຕາມ ການຊີ້ນຳຂອງທ່ານ ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ສິງຫາ 2019.

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດ ແຈ້ງທິດຊີ້ນຳຂອງທ່ານ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ມາຍັງທ່ານຊາບດັ່ງນີ້: "ເຫັນດີໃນດ້ານຫຼັກການ ໃຫ້ກົມລ້ຽງສັດ ແລະ ການປະມົງ ເຊັນສັນຍາກັບບໍລິສັດ ແອວເອັສ ເສີນຄັງ ຂາອອກ-ຂາເຂົ້າ ຈຳກັດ ວ່າດ້ວຍການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມຂອງໂຄງການ ລ້ຽງງົວຊີ້ນເປັນສິນຄ້າ ແລະ ສ້າງສະຖານທີ່ກັກກັນສັດ ຢູ່ບ້ານ ນາຄຳ ເມືອງ ສິງ, ແຂວງ ຫຼວງນ້ຳທາ.".

ສະນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າ ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້.

ກິແກ້ວ ສິງນາວົງ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ລມຕ, ຮລມຕ | 6 ສະບັບ(ເພື່ອຂໍລາຍງານ) |
| 2. ຄະນະຫ້ອງການ | 1 ສະບັບ |
| 3. ພະແນກເລຂານຸການ ແລະ ພິທີການ | 1 ສະບັບ |
| 4. ເກັບມ້ຽນ | 1 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ 2480/ກລປ

ນະຄອນຫຼວງວຽງຈັນ, ວັນທີ: 03 SEP 2019

# ສັນຍາ

## ວ່າດ້ວຍການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມ ຂອງໂຄງການລ້ຽງງົວຊີ້ນ ເປັນສິນຄ້າ ແລະ ສ້າງສະຖານທີ່ກັກກັນສັດ ຢູ່ບ້ານປ່າຊາງ ແລະ ບ້ານນາຄຳ ເມືອງສິງ ແຂວງຫຼວງນ້ຳທາ

## ລະຫວ່າງ

ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງຕາງໜ້າໂດຍ ກົມລ້ຽງສັດ ແລະ ການປະມົງ
ສຳນັກງານ ຕັ້ງຢູ່ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ໂທລະສັບ: 021-215242-3, ແຟັກ : 021 215141 ຕໍ່ໄປນີ້ເອີ້ນວ່າ ຝ່າຍ "ກ"

## ກັບ

ບໍລິສັດ ແອວເອັສ ເສີນຄັງ ຂາອອກ - ຂາເຂົ້າຈຳກັດ ໃນນາມຜູ້ລົງທຶນ ຈັດຕັ້ງປະຕິບັດໂຄງການ
ທີ່ມີສຳນັກງານ ຕັ້ງຢູ່ ບ້ານນາຄຳ, ເມືອງສິງ, ແຂວງຫຼວງນ້ຳທາ, ໂທລະສັບ: 020-52 59 98 99 ຕໍ່ໄປນີ້ ເອີ້ນວ່າ ຝ່າຍ "ຂ"

ສັນຍາສະບັບນີ້ ສ້າງຂຶ້ນເພື່ອເປັນບ່ອນອີງໃຫ້ແກ່ ການສ້າງສະຖານທີ່ກັກກັນສັດປະເພດ ງົວ-ຄວາຍ ຢູ່ ບ້ານນາຄຳ, ເມືອງສິງ, ແຂວງຫຼວງນ້ຳທາ ພາຍໃຕ້ໂຄງການລ້ຽງງົວຊີ້ນເປັນສິນຄ້າ ແລະ ສ້າງສະຖານທີ່ກັກກັນສັດ ພາຍໃຕ້ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ທີ່ ຝ່າຍ "ຂ" ໄດ້ເຊັນສັນຍາລົງທຶນ ກັບ ອົງການປົກຄອງແຂວງຫຼວງນ້ຳທາ ທີ່ຕາງໜ້າໂດຍ ພະແນກແຜນການ ແລະ ການລົງທຶນແຂວງ ສະບັບເລກທີ 517/ພຜທ.ນທ, ລົງວັນທີ 26 ມິຖຸນາ 2018 ໂດຍສະເພາະແມ່ນ ມາດຕາ 7 ຂໍ້ 7.11 ແລະ ມາດຕາ 19 ຂໍ້ 19.3 ໃຫ້ຖືກຈັດຕັ້ງປະຕິບັດຢ່າງເປັນທາງການ ແລະ ອີງຕາມໜັງສືຢັ້ງຢືນຈາກ ບໍລິສັດ ແອວເອັສ ການຄ້າ ຂາອອກ - ຂາເຂົ້າຈຳກັດ ສະບັບລົງວັນທີ 099/19, ນະຄອນຫຼວງວຽງຈັນ, ວັນທີ 23/08/2019 ທັງສອງຝ່າຍຈຶ່ງສ້າງສັນຍາສະບັບນີ້ຂຶ້ນ.

### ມາດຕາ 1: ຈຸດປະສົງຂອງສັນຍາ

ເພື່ອເປັນບ່ອນອີງໃນການສ້າງສະຖານທີ່ກັກກັນສັດເພື່ອສົ່ງອອກ ແນໃສ່ຕອບສະໜອງຕາມເນື້ອໃນຈິດໃຈຂອງລັດຖະບານທັງສອງຝ່າຍ ບົນພື້ນຖານຄວາມສອດຄ່ອງດ້ານກົດໝາຍ, ລະບຽບການ, ກຳນົດໝາຍເຕັກນິກຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂອງທັງສອງຝ່າຍ ແລະ ຄຳແນະນຳ ຂອງອົງການສຸຂະພາບສັດສາກົນ ປະກອບສ່ວນ ຈັດຕັ້ງປະຕິບັດສັນຍາສຸຂານາໄມ ແລະ ສຸຂານາໄມພືດ ກ່ຽວກັບ ການສົ່ງງົວຊີ້ນຈາກ ສປປ ລາວ ໄປຍັງ ສປ ຈີນ ໃຫ້ເປັນຮູບປະທຳ.

**ມາດຕາ 2: ການຮັບຮູ້ຂອງສອງຝ່າຍ**

2.1 ຝ່າຍ "ກ" ຮັບຮູ້ ຝ່າຍ "ຂ" ວ່າ: ໄດ້ຮັບອະນຸມັດ ຈາກລັດຖະບານລາວຢ່າງເປັນທາງການ ໃນການລົງທຶນສ້າງ ສະຖານທີ່ກັກກັນສັດປະເພດ ງົວ-ຄວາຍ ຢູ່ ບ້ານນາຄຳ ເມືອງສິງ ແຂວງຫຼວງນ້ຳທາ;

2.2 ຝ່າຍ "ກ" ຮັບຮູ້ເຖິງສິດ, ພັນທະ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງ ຝ່າຍ "ຂ" ແລະ ເງື່ອນໄຂອື່ນທີ່ລະບຸຢູ່ ໃນສັນຍາແມ່ ທີ່ ຝ່າຍ "ຂ" ໄດ້ເຊັນສັນຍາກັບອົງການປົກຄອງແຂວງຫຼວງນ້ຳທາ;

2.3 ຝ່າຍ "ຂ" ຮັບຮູ້ວ່າ: ການລົງທຶນໃນໂຄງການດັ່ງກ່າວ ແມ່ນໂຄງການຕິດພັນກັບ ມາດຕະການດ້ານເຕັກນິກ ແລະ ແຜນການຮ່ວມມື ໄລຍະຍາວຂອງລັດຖະບານ;

2.4 ຝ່າຍ "ຂ" ຮັບຮູ້ວ່າ: ການກຳນົດເງື່ອນໄຂ, ການວາງມາດຕະຖານ ແລະ ການຈັດຕັ້ງປະຕິບັດມາດຕະການ ດ້ານ ສຸຂານາໄມ ຢູ່ສະຖານທີ່ກັກກັນສັດ ແມ່ນຄວາມຮັບຜິດຊອບ ຂອງອົງການຄຸ້ມຄອງການລ້ຽງສັດ ແລະ ການ ສັດຕະວະແພດ ຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ ໃນ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ກ່ຽວກັບ ການ ກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ.

**ມາດຕາ 3: ໄລຍະເວລາ ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການນຳໃຊ້ສະຖານທີ່ກັກກັນສັດ**

3.1 ຝ່າຍ "ຂ" ຕ້ອງດຳເນີນການກໍ່ສ້າງພື້ນຖານໂຄງລ່າງ ຂອງສະຖານທີ່ກັກກັນສັດ ໃຫ້ຖືກຕ້ອງຕາມມາດຕະຖານ ເຕັກນິກ ແລະ ແຜນຜັງ ຂອງສະຖານທີ່ກັກກັນສັດ ທີ່ ຝ່າຍ "ກ" ໄດ້ຢັ້ງຢືນຮັບຮອງເອົາແລ້ວ ພາຍໃນເກົ້າສິບ ວັນ ນັບແຕ່ມື້ທີ່ສັນຍາມີຜົນສັກສິດ;

3.2 ຝ່າຍ "ກ" ຮັບຮູ້ວ່າ: ສະຖານທີ່ກັກກັນສັດ ທີ່ ຝ່າຍ "ຂ" ໄດ້ຮັບການອະນຸຍາດດັ່ງກ່າວໃຫ້ເປັນຕົວແບບໜຶ່ງ ທີ່ຈະປະຕິບັດມາດຕະການດ້ານສຸຂານາໄມ ຕາມກົດໝາຍ ແລະ ລະບຽບການ ທີ່ອົງການຄຸ້ມຄອງວຽກງານ ການລ້ຽງສັດ ແລະການ ສັດຕະວະແພດ ຂອງ ສປປ ລາວ ກຳນົດອອກ;

3.3 ຝ່າຍ "ກ" ເຫັນດີໃຫ້ ຝ່າຍ "ຂ" ນຳໃຊ້ສະຖານທີ່ກັກກັນສັດດັ່ງກ່າວ ພາຍຫຼັງສຳເລັດການກໍ່ສ້າງໃນແຕ່ລະ ໄລຍະ ໂດຍຖືກກວດກາ, ຮັບຮອງ ແລະ ຢັ້ງຢືນ ຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການ ສັດຕະວະແພດ ຂອງ ສປປ ລາວ ແລະ ຮັບຮູ້ຈາກ ອົງການທີ່ກ່ຽວຂ້ອງຂອງ ສປ ຈີນ.

**ມາດຕາ 4: ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງ ຝ່າຍ "ກ"**

ຝ່າຍ "ກ" ມີ ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

4.1 ກວດກາ ແລະ ອອກໃບຢັ້ງຢືນ ຮັບຮອງເອົາແຜນຜັງ ແລະ ແບບ ຂອງສະຖານທີ່ກັກກັນສັດ ພ້ອມທັງລົງ ຕິດຕາມ, ກວດກາການຈັດຕັ້ງປະຕິບັດໂຄງການເປັນແຕ່ລະໄລຍະ ໂດຍມີການແຈ້ງໃຫ້ ຝ່າຍ "ຂ" ຮັບຊາບ ຢ່າງເປັນລາຍລັກອັກສອນລ່ວງໜ້າ;

4.2 ສົມທົບກັບພາກສ່ວນກ່ຽວຂ້ອງຂອງ ຝ່າຍ "ກ" ແລະ ຜູ້ຕາງໜ້າຂອງເຈົ້າໜ້າທີ່ຂອງລັດ ຂອງ ສປ ຈີນ ລົງ ກວດກາ, ປະເມີນຄວາມຄືບໜ້າການກໍ່ສ້າງ, ໃຫ້ຄຳແນະນຳດ້ານວິຊາການ, ອອກໃບຢັ້ງຢືນຮັບຮອງມາດຕະ ຖານ ລວມທັງອອກອະນຸຍາດເປີດນຳໃຊ້ສະຖານທີ່ກັກກັນສັດຢ່າງເປັນທາງການ;

4.3 ສັ່ງໂຈະ ຫຼື ຍົກເລີກການໃຊ້ບໍລິການສະຖານທີ່ກັກກັນສັດດັ່ງກ່າວ ຖ້າຫາກເຫັນວ່າ: ຝ່າຍ "ຂ" ບໍ່ສາມາດຕອບ ສະໜອງຄວາມຕ້ອງການສົ່ງສັດອອກ ໄປ ສປ ຈີນ ຫລື ບໍ່ປະຕິບັດຕາມກົດໝາຍ, ລະບຽບການ ແລະ ມາດຖານເຕັກນິກຂອງ ຝ່າຍ "ກ" ກຳນົດ;

4.4 ຈັດຕັ້ງປະຕິບັດວຽກງານວິຊາສະເພາະ ຢູ່ພາຍໃນສະຖານທີ່ກັກກັນສັດ ໂດຍອີງໃສ່ເງື່ອນໄຂຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງຝ່າຍ "ກ" ໂດຍສອດຄ່ອງກັບມາດຕະການ ດ້ານສຸຂານາໄມ ແລະ ສຸຂານາໄມພືດຂອງອົງການສຸຂະພາບສັດສາກົນກຳນົດ;

4.5 ເຂົ້າໄປສະຖານທີ່ກັກກັນສັດ ໃນກໍລະນີທີ່ມີອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂອງ ສປ ຈີນ ມາເຄື່ອນໄຫວຕິດຕາມກວດກາ, ປະເມີນຄວາມສ່ຽງ ຫຼື ປະຕິບັດໜ້າທີ່ວິຊາການ ເປັນແຕ່ລະໄລຍະ.

**ມາດຕາ 5: ສິດ ແລະ ໜ້າທີ່ຮັບຜິດຊອບຂອງ ຝ່າຍ "ຂ"**

ຝ່າຍ "ຂ" ມີສິດ ແລະ ໜ້າທີ່ຮັບຜິດຊອບ ດັ່ງນີ້:

5.1 ອອກແບບແຜນຜັງສະຖານທີ່ກັກກັນສັດ ໃຫ້ມີຂະໜາດເໝາະສົມ ຕາມທີ່ໄດ້ລະບຸໃນບົດວິພາກເສດຖະກິດເຕັກນິກ, ມາດຕະຖານດ້ານເຕັກນິກ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແລະ ຄຳແນະນຳຂອງອົງການສຸຂະພາບສັດສາກົນ (OIE) ກຳນົດ;

5.2 ຂະຫຍາຍກິດຈະການ ຫຼື ສ້າງສະຖານທີ່ກັກກັນ ຢູ່ແຫ່ງໃໝ່ ຖ້າຫາກເຫັນວ່າມີຄວາມຈຳເປັນ ແຕ່ຕ້ອງໄດ້ຮັບການເຫັນດີຕົກລົງເຫັນດີຂອງ ຝ່າຍ "ກ";

5.3 ຮັບຜິດຊອບຈັດຕັ້ງປະຕິບັດການຄວບຄຸມພະຍາດປາກເປື່ອຍລົງເລັບ, ພະຍາດເຕົ້າໂຮມເລືອດງົວ-ຄວາຍ ແລະ ພະຍາດອື່ນ ຕາມທີ່ອົງການຄຸ້ມຄອງ ຂອງ ສປປ ລາວ ແລະ ສປ ຈີນ ພ້ອມທັງ ປະຕິບັດແຜນການປ້ອງກັນ ແລະ ຄວບຄຸມພະຍາດສັດ ທີ່ອົງການຄຸ້ມຄອງຂອງ ຝ່າຍ "ກ" ກຳນົດ;

5.4 ປະຕິບັດການກັກກັນສັດໃຫ້ຖືກຕ້ອງຕາມຫຼັກວິຊາການ, ຂັ້ນຕອນ, ລະບຽບການ ແລະ ມາດຖານເຕັກນິກທີ່ອົງການສຸຂະພາບສັດສາກົນ (OIE) ກຳນົດ ແລະ ມີຄວາມຮັບຜິດຊອບໃນການປະຕິບັດສັນຍາວ່າດ້ວຍການສົ່ງ ງົວ-ຄວາຍ ຈາກ ສປປ ລາວ ໄປ ສປ ຈີນ ທີ່ລັດຖະບານລາວ ໄດ້ລົງນາມກັບ ສປ ຈີນ.

5.5 ຮັບຜິດຊອບສົ່ງເສີມປະຊາຊົນຢູ່ທ້ອງຖິ່ນປູກຫຍ້າ ແລະ ພືດອາຫານສັດໃຫ້ເປັນຂະບວນ ເພື່ອຮັບປະກັນ ສະໜອງຫຍ້າ, ພືດອາຫານສັດ ແລະ ອາຫານຄົບສ່ວນໃຫ້ພຽງພໍກັບຄວາມຕ້ອງການຂອງການລ້ຽງສັດ ດ້ວຍການລົງທຶນສະໜອງກົນຈັກກະສິກຳ, ແນວພັນພືດອາຫານສັດ ລວມທັງສົ່ງເສີມເຕັກນິກ ກ່ຽວກັບການປູກ, ບຸງແຕ່ງ ແລະ ນຳໃຊ້ອາຫານສັດ ໃຫ້ແກ່ກຸ່ມຜະລິດໃຫ້ເກີດການພັດທະນາ. ໃນກໍລະນີເກີດໄພພິບັດ ທີ່ຂາດແຄນອາຫານສັດ, ຝ່າຍ "ຂ" ສາມາດສະເໜີ ຝ່າຍ "ກ" ເພື່ອຂໍອະນຸຍາດນຳເຂົ້າອາຫານສັດ;

5.6 ປະກອບສ່ວນໃນການພັດທະນາ ຊັບພະຍາກອນມະນຸດ, ຍົກສູງສີມືແຮງງານຂອງຊາວກະສິກອນ ລວມທັງການບຳລຸງ, ກໍ່ສ້າງພະນັກງານວິຊາການຂອງຝ່າຍ "ກ" ດ້ວຍການຈັດຝຶກອົບຮົມ, ຍົກລະດັບ ແລະ ທັດສະນະສຶກສາ ຢູ່ພາຍໃນ ຫຼື ຕ່າງປະເທດ ຕາມຄວາມເໝາະສົມໃນແຕ່ລະໄລຍະ;

5.7 ຮັບຜິດຊອບຄ່າສິ້ນເປືອງຂອງທີມງານ ຝ່າຍ "ກ" ທີ່ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດ ໂຄງການໃນແຕ່ລະຄັ້ງຕາມການແຈ້ງເຊີນຂອງ ຝ່າຍ "ຂ" ຫຼື ຕາມເຫັນດີຕົກລົງກັນຂອງທັງສອງຝ່າຍ;

5.8 ສະໜອງສິ່ງອຳນວຍຄວາມສະດວກ ໃນການກິນຢູ່, ພັກເຊົາ ແລະ ນະໂຍບາຍສະຫວັດດີການທີ່ເໝາະສົມໃຫ້ແກ່ພະນັກງານວິຊາການຂອງ ຝ່າຍ "ກ" ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ວິຊາສະເພາະປະຈຳຢູ່ສະຖານທີ່ກັກກັນສັດດັ່ງກ່າວ;

5.9 ນຳສັນຍາສະບັບນີ້ ໄປຂຶ້ນທະບຽນ ນຳຫ້ອງການທະບຽນສານ.

## ມາດຕາ 6: ການປະຕິບັດມາດຕະການ ດ້ານວິຊາການຂອງ ຝ່າຍ "ກ"

ຝ່າຍ "ກ" ມີສິດ ໃນການປະຕິບັດມາດຕະການ ດ້ານວິຊາການ ຕໍ່ ຝ່າຍ "ຂ" ໃນກໍລະນີດັ່ງນີ້:

6.1 ກໍລະນີ ຝ່າຍ "ຂ" ບໍ່ປະຕິບັດມາດຕະການດ້ານການກັກກັນ ແລະ ການປ້ອງກັນພະຍາດສັດຢ່າງເຄັ່ງຄັດ ຊຶ່ງກໍ່ໃຫ້ເກີດມີການລະບາດ ຂອງພະຍາດປາກເປື່ອຍລີບເລັບ, ພະຍາດເຕົ້າໂຮມເລືອດ ງົວ-ຄວາຍ ແລະ ພະຍາດຕິດແປດອື່ນທີ່ຈຳເປັນຕ້ອງແຈ້ງຢູ່ໃນສະຖານທີ່ກັກກັນສັດ ຫຼື ມີການປົນເປື້ອນສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງບໍລິໂພກ ຝ່າຍ "ຂ" ຕ້ອງຮັບຜິດຊອບຄ່າສິ້ນເປືອງທັງໝົດ ໃນການປະຕິບັດມາດຕະການຄວບຄຸມ ຂອງຝ່າຍ "ກ";

6.2 ກໍລະນີ ເກີດການລະບາດພະຍາດສັດ ຢູ່ນອກສະຖານທີ່ກັກກັນສັດ ເຊັ່ນ: ໃນຂອບເຂດລ້ຽງສັດ ແລະ ເຂດກັນຊົນ ຕາມທີ່ ຝ່າຍ "ກ" ກຳນົດ, ຝ່າຍ "ກ" ສາມາດປະຕິບັດມາດຕະການ ດ້ານວິຊາການທີ່ເໝາະສົມ ເພື່ອປ້ອງກັນບໍ່ໃຫ້ເຊື້ອພະຍາດແຜ່ລາມເຂົ້າສູ່ສະຖານທີ່ກັກກັນສັດ. ຝ່າຍ "ຂ" ຕ້ອງໃຫ້ການຮ່ວມມື ແລະ ສະໜັບສະໜູນ ໃນການດຳເນີນມາດຕະການປ້ອງກັນ.

## ມາດຕາ 7: ການເກັບຄ່າທຳນຽມ ແລະ ຄ່າບໍລິການ

7.1 ຝ່າຍ "ຂ" ຕ້ອງໃຫ້ຄວາມຮ່ວມມື ກັບ ຝ່າຍ "ກ" ໃນການເກັບຄ່າທຳນຽມ ແລະ ຄ່າບໍລິການ ດ້ານວິຊາການ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

7.2 ສ່ວນການກຳນົດການເກັບຄ່າສິ້ນເປືອງອື່ນ ທີ່ເປັນລາຍຮັບຂອງສະຖານທີ່ກັກກັນສັດ ຝ່າຍ "ຂ" ສາມາດເກັບໄດ້ ແຕ່ຕ້ອງຜ່ານການປຶກສາຫາລື ກັບ ຝ່າຍ "ກ" ແລະ ຕ້ອງແຈ້ງໃຫ້ຜູ້ມາໃຊ້ບໍລິການຊາບຢ່າງໂປ່ງໃສ.

## ມາດຕາ 8: ການດັດແກ້ສັນຍາ ແລະ ສ້າງສັນຍາຍ່ອຍ

8.1 ຕະຫຼອດໄລຍະເວລາທີ່ປະຕິບັດສັນຍາສະບັບນີ້ ເມື່ອເຫັນວ່າ ເນື້ອໃນຂໍ້ໃດຂໍ້ໜຶ່ງ ບໍ່ສອດຄ່ອງກັບສະພາບຕົວຈິງ ຫຼື ມີບາງວຽກອື່ນທີ່ສັນຍານີ້ບໍ່ກວມເອົາ, ແຕ່ມີຄວາມກ່ຽວພັນກັບການຈັດຕັ້ງປະຕິບັດໂຄງການ ແມ່ນມີຄວາມຈຳເປັນຕ້ອງໄດ້ມີການດັດແກ້, ປັບປຸງເພີ່ມຕື່ມ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການມີປະສິດທິພາບ ແລະ ປະສິດທິຜົນສູງ, ຊຶ່ງຕ້ອງໄດ້ຮັບຄວາມເປັນເອກະພາບ ກັນທັງສອງຝ່າຍ; ການດັດແກ້ດັ່ງກ່າວແມ່ນຈະເຮັດສັນຍາຍ່ອຍຕິດຄັດສັນຍາສະບັບນີ້ ແລະ ຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນສັກສິດຮ່ວມກັບສັນຍາສະບັບນີ້;

8.2 ໃນກໍລະນີຝ່າຍໃດຝ່າຍໜຶ່ງ ເຫັນວ່າ ບາງກິດຈະກຳທີ່ລະບຸໃນສັນຍາສະບັບນີ້, ຫາກບໍ່ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ ຊຶ່ງຈະກໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ຝ່າຍໃດຝ່າຍໜຶ່ງ ຫຼື ສອງຝ່າຍ, ກໍ່ສາມາດສະເໜີເປັນລາຍລັກອັກສອນ ຕໍ່ ອີກຝ່າຍໜຶ່ງ ເພື່ອຮ່ວມກັນປຶກສາຫາລື, ປັບປຸງ, ດັດແກ້ເນື້ອໃນສັນຍາຮ່ວມກັນ, ພ້ອມທັງເຮັດສັນຍາຍ່ອຍຕິດສັນຍາສະບັບນີ້.

## ມາດຕາ 9: ຈຳນວນ ແລະ ການນຳໃຊ້ສັນຍາ

ສັນຍາສະບັບນີ້ ສ້າງຂຶ້ນເປັນສອງພາສາ (ພາສາລາວ ແລະ ພາສາຈີນ), ແຕ່ລະພາສາເທົ່າທຽມກັນ ແລະ ມີທັງ

ໝົດ 13 ສະບັບຕົ້ນ, ຝ່າຍ "ກ" ເກັບໄວ້ 02 ສະບັບ, ຝ່າຍ "ຂ" 01 ສະບັບ, ພະແນກແຜນການ ແລະ ການລົງທຶນແຂວງຫຼວງນ້ຳທາ 08 ສະບັບ (ເພື່ອແຈກໃຫ້ຄະນະ ຄລທ ຂັ້ນແຂວງ), ພະແນກກະສິກຳ ແລະ ປ່າໄມ້ 01 ສະບັບ ແລະ ຫ້ອງການທະບຽນສານ 01 ສະບັບ.

ມາດຕາ 10: ຜົນສັກສິດຂອງສັນຍາ

ສັນຍາສະບັບນີ້ມີຜົນສັກສິດນັບແຕ່ມື້ທີ່ທັງສອງຝ່າຍລົງລາຍເຊັນເປັນຕົ້ນໄປ.

| ຝ່າຍ "ກ" | ຝ່າຍ "ຂ" |
|---|---|
| ນ. ວິໄລພອນ ວໍລະພົມ | ສົມສາຍ ດວງຈະເລີນ |
| ກົມລ້ຽງສັດ ແລະ ການປະມົງ | ບໍລິສັດ ແອວເອັສ ເສີນຄັງ |
| ກະຊວງກະສິກຳ ແລະ ປ່າໄມ້ | ຂາອອກ - ຂາເຂົ້າຈຳກັດ |

ຫ້ອງການທະບຽນສານແຂວງ

ໄທ ລໍເປັ້ຍຢາວ

ກົມທະບຽນສານ
ເລກທີ 2580 / ກທສ,ວັນທີ 05-09-2019
ຢັ້ງຢືນ ສັນຍາ
ຄ່າທຳນຽມ 20.000 ກີບ
(ຂຽນເປັນຕົວໜັງສື) ຊາວພັນກີບ
ຄ່າບໍລິການ 600.000 ກີບ
(ຂຽນເປັນຕົວໜັງສື) ຫົກແສນກີບ
ຫົວໜ້າກົມທະບຽນສານ

老挝人民民主共和国
和平独立民主统一繁荣
*****

农林部
养殖和渔业司

第2480号
2019年09月03日于万象市

# 关于在琅南塔省勐新县巴桑村和纳坎村实施商品化养殖肉牛和建设动物检验检疫场项目卫生标准的合同

合同双方分别为：

由养殖和渔业司为代表的农林部
地址：万象市西科达本县北溪潭村
电话：021-215242-3，传真：021215141，以下简称为甲方

和

LS诚康进出口贸易有限公司以投资者的名义
地址：琅南塔省勐新县纳坎村
电话：020-52 59 98 99，以下简称为乙方

本合同作为商品化养殖肉牛和建设动物检验检疫场项目项下在巴桑村和纳坎村地区建设输华黄牛、水牛类动物检验检疫场的依据，并使乙方和琅南塔省计划和投资厅为代表的琅南塔省政府于2018年6月26日签订的第517号投资合同关于动植物卫生标准的规定，特别是第7条7.11款和第19条19.3款规定得以正式实施，依据LS进出口贸易有限公司于2019年8月23日签发的证明文件，双方共同签订本合同。



火炬翻译服务公司 (政府认可)
地址：万象市占塔武里县米赛村第15组三升泰路144/1-2号
电话：021 214118，020 22214443

第一条： 合同目的

为了作为建设出口动物检验检疫场的依据，旨在贯彻双方政府达成的一致，在符合相关法律法规和双方相关管理部门的技术标准和国际兽疫局的相关说明文件的基础上，实质性贯彻实施老挝输华肉牛检验检疫合同。

第二条： 双方确认

2.1 甲方确认乙方：获得老挝政府正式批准在琅南塔省勐新县巴桑村和纳坎村投资建设黄牛、水牛类动物检验检疫场。

2.2 甲方确认乙方和琅南塔省政府签订的母合同项下之乙方的权利、义务和责任以及其他条件。

2.3 乙方确认：该投资项目涉及相关技术标准和双方政府的长期合作计划。

2.4 乙方确认：制定相关条件和标准以及在动物检验检疫场实施卫生标准事宜，须依据老挝输华畜类检验检疫要求的规定，归为老挝养殖和兽医管理部门的责任。

第三条： 建设基础设施的期限和使用动物检验检疫场的期限

3.1 乙方应自本合同生效后九十天内按甲方审批通过的技术标准和动物检验检疫场规划图完成动物检验检疫场的基础设施建设工作。

3.2 甲方确认：乙方获准建设的动物检验检疫场是未来实施相关卫生标准的示范点，以便使之符合国际兽疫局（OIE）相关说明文件以及老挝养殖和兽医管理部门出台的相关法律法规。

3.3 甲方同意乙方在完成各阶段建设工作并通过中老两国养殖和兽医管理部门审批和证明后，使用上述动物检验检疫场。

第四条： 甲方的权利和责任

甲方有如下权利和责任：

4.1 检查并签发动物检验检疫场规划图证明书，书面提前通知乙方后在项目设计、建设基础设施、配置设备和相关便利设施等项目实施阶段到实地监督检查。



火炬翻译服务公司 (政府认可)
地址：万象市占塔武里县米赛村第 15 组三升泰路 144/1-2 号
电话：021 214118，020 22214443

4.2 协调甲方相关部门和中国政府派出人员到实地检查、评估建设进展、进行技术指导、签发标准确认书并签发正式使用动物检验检疫场许可书。

4.3 若发现乙方无法满足老挝输华动物相关要求或不遵守相关法律法规和甲方技术标准的情况下，有权勒令暂停或取消使用该动物检验检疫场。

4.4 依据甲方相关管理部门的条件在动物检验检疫场内执行专业技术工作，使之符合国际兽疫局的相关卫生标准。

4.5 中国相关管理部门在各阶段派员前来监督检查、评估风险或执行技术工作时，进入动物检验检疫场。

第五条：　乙方的权利和责任

乙方有如下权利和责任：

5.1 按项目可行性研究报告、双方管理部门的技术标准和国际兽疫局（OIE）相关说明文件规定设计规模适当的动物检验检疫场规划图。

5.2 如果认为有必要，可扩大业务或在新的场所建设动物检验检疫场，但是必须事先征求甲方同意。

5.3 负责管理和限制牛口蹄疫、聚血症等双方管理部门规定的其他疾病，执行甲方管理部门制定的动物疾病防治和管理计划。

5.4 按国际兽疫局规定的技术原则、程序、规定和技术标准执行动物检验检疫工作，负责实施中老两国政府签订的老挝输华牛畜合同。

5.5 负责通过投资提供农业机械、提供饲料作物种苗和提供种植、加工技术以推动当地群众大规模种植饲料草和其他饲料作物，以保证能够供应养殖所需的饲料草、饲料作物和足够的食品，使农户能够有效使用动物饲料并得到发展。若发生自然灾害导致缺少动物饲料，乙方可向甲方申请进口动物饲料。

5.6 参与发展人力资源，提高农户劳动技能，包括通过酌情提供资金在各阶段到国内外进行培训、考察、酌情的方式培养甲方技术人员。



火炬翻译服务公司 (政府认可)
地址：万象市占塔武里县米赛村第 15 组三升泰路 144/1-2 号
电话：021 214118，020 22214443

5.7 负责甲方按乙方邀请书或双方同意意见而派遣到项目实地监督检查项目实施情况的工作组的相关费用。

5.8 负责为甲方派驻该动物检验检疫场执行专业工作的技术人员提供食宿、补贴等便利条件。

5.9 持本合同到公证处进行公证。

**第六条： 实施专业措施**

在如下情况下，甲方有权对乙方实施专业措施：

6.1 如果乙方未严格遵守相关检验检疫和疾病防治措施导致在动物检疫场发生牛口蹄疫、聚血症等必须通报的传染疫情或在是食品中混在危险物质，乙方须全部负责甲方采取相关措施的费用。

6.2 若在甲方规定的口蹄疫管制区、口蹄疫缓冲区等动物检验检疫场以外的场所出现动物传染疫情，甲方可实施适当的专业措施，以避免疫情传染到动物检验检疫场，乙方应对甲方采取相关措施活动提供相应合作和支持。

**第七条： 征收手续费和服务费**

7.1 乙方应在甲方按老挝相关法律法规征收手续费和专业服务费时予以合作。

7.2 乙方可征收作为动物检验检疫场收入的各种费用，但是必须事先与甲方协商并透明地通报消费者。

**第八条： 修改合同和附上的分合同**

8.1 执行本合同期间，若发现本合同某个条款不符合实际情况或发生涉及实施本项目的未尽事宜，有必要修改、补充本合同以保证有效实施本项目，但是双方应事先达成一致；上述修改将以分合同形式形成并作为本合同附件和本合同一部分，和本合同有同等效力。

8.2 若任何一方认为本合同规定的某项业务不符合实际情况且会对某一方或双方造成不利影响的，可以书面申请另一方以便共同协商、修改合同内容，并以分合同形式形成并作为本合同附件。

第九条：　合同份数和发送

本合同以两种文字打印（中文和老挝文），每种文字有同等效力。本合同共打印 13 份，其中甲方保存 02 份，乙方保存 01 份，省计划和投资厅保存 08 份（分发给省级投资管理委员会成员，省农林厅 01 份、省公证处 01 份）。

第十条：　合同效力

本合同自签署之日起生效。

| 甲方 | 乙方 |
|---|---|
| Mrs. Vilayphone VORRAPHIM | |
| 农林部养殖和渔业司 | LS 诚康进出口贸易有限公司 |

省公证处